# ຂໍ້ ມູນສໍາຄັນກ່ ຽວກັບການຄຸ້ ມຄອງຄວາມປອດໄພດ້ ານການເງິນແລະບາງກໍລະນີທີ່ກ່ ຽວຂ້ ອງກັບເດັກນ້ ອຍເທົ່ານັ້ ນສໍາລັບໂຄງການໂອກາດໃນການເຮັດວຽກແລະຄວາມຮັບຜິດຊອບຕໍ່ເດັກນ້ ອຍ (CALWORKS) ໃນລັດຄາລິຟໍເນຍ

**ກົດລະບຽບກ່ຽວກັບຄ່າລ້ຽງດູເດັກນ້ອຍໄດ້ປ່ຽນແປງໄປສໍາລັບຄອບຄົວຂອງທ່ານ.** ທ່ານກໍາລັງໄດ້ຮັບຄວາມຊ່ວຍເຫຼືອເປັນເງິນສົດ CalWORKs ເທົ່ານັ້ນສໍາລັບລູກຄົນດຽວຫຼືຫຼາຍຄົນຂອງທ່ານ. ການປ່ຽນແປງທີ່ນໍາໃຊ້ກັບທ່ານມີດັ່ງຕໍ່ໄປນີ້:

- ສິດທິໃນການລ້ຽງດູລູກຂອງທ່ານຈະບໍ່ຖືກມອບໝາຍໃຫ້ກັບທາງຄາວຕີ້, ເຖິງຢ່າງໃດກໍ່ຕາມການທີ່ທ່ານມີກໍລະນີຄ່າລ້ຽງດູເດັກນ້ອຍໃຫ້ເພື່ອອົງການຄ່າລ້ຽງດູເດັກນ້ອຍທ້ອງຖິ່ນ (LCSA) ຊ່ວຍເຫຼືອນັ້ນ ທ່ານແລະລູກຂອງທ່ານຈະໄດ້ຮັບສິດທິປະໂຫຍດຕ່າງໆ;
- ຈໍານວນເງິນຊ່ວຍເຫຼືອລ້າຂອງທ່ານຈະບໍ່ປ່ຽນແປງຖ້າທ່ານບໍ່ຕ້ອງການການບໍລິການຊ່ວຍເຫຼືອເດັກນ້ອຍຂອງ LCSA, ເຊິ່ງລວມທັງການຊອກຫາພໍ່ຫຼືແມ່ທີ່ບໍ່ມີສິດປົກຄອງລູກຂອງທ່ານ ຫຼືການກໍານົດຄວາມເປັນພໍ່ຂອງລູກຂອງທ່ານ;
  - ທ່ານຄວນຮັບຮູ້ວ່າການຊອກຫາພໍ່ຫຼືແມ່ທີ່ບໍ່ມີສິດປົກຄອງລູກ ແລະການກໍານົດຄວາມເປັນພໍ່ຈະຊ່ວຍທ່ານໄດ້ໃນອະນາຄົດໃນການຮຽກເກັບເງິນຄ່າລ້ຽງດູເດັກນ້ອຍຖ້າທ່ານຕ້ອງການເງິນນັ້ນ; ແລະ
  - ໃນອະນາຄົດ ຖ້າທ່ານມີສິດໄດ້ຮັບຄວາມຊ່ວຍເຫຼືອເປັນເງິນສົດສໍາລັບກໍລະນີຂອງລູກຄົນດຽວຫຼືຫຼາຍຄົນຂອງທ່ານ, ອາດຈະມີການນໍາໃຊ້ກົດລະບຽບກ່ຽວກັບຄ່າລ້ຽງດູເດັກນ້ອຍທີ່ແຕກຕ່າງກັບກົດລະບຽບນີ້..
- ທ່ານສາມາດເກັບເງິນຄ່າລ້ຽງດູເດັກນ້ອຍທັງໝົດທີ່ພໍ່ຫຼືແມ່ທີ່ບໍ່ມີສິດປົກຄອງລູກເອົາໃຫ້ທ່ານ ຫຼືເງິນທີ່ LCSA ຮຽກເກັບແທນເອົາໃຫ້ທ່ານ. ທ່ານບໍ່ຈໍາເປັນຕ້ອງສົ່ງເງິນນັ້ນກັບຄືນໄປໃຫ້ທາງຄາວຕີ້;
- ບຸກຄົນຕ່າງໆໄດ້ຮັບຄ່າລ້ຽງດູເດັກນ້ອຍດ້ວຍວິທີຕ່າງກັນ. ສໍາລັບບາງຄົນທາງຄາວຕີ້ຮຽກເກັບແທນ ແລ້ວຈາກນັ້ນອົງການ LCSA ຈະນໍາສົ່ງເງິນນັ້ນໃຫ້ກັບພວກເຂົາເຈົ້າ ແລະບາງຄົນໄດ້ຮັບເງິນໂດຍກົງຈາກພໍ່ຫຼືແມ່ທີ່ບໍ່ມີສິດປົກຄອງລູກ ຫຼື NCP.
  - ຖ້າທ່ານມີກໍລະນີຂໍຄວາມຄວາມຊ່ວຍເຫຼືອຄ່າລ້ຽງດູເດັກນ້ອຍທີ່ເປີດຢູ່ກັບທາງ LCSA ແລ້ວ, ທ່ານບໍ່ຈໍາເປັນຕ້ອງເຮັດຫຍັງເລີຍເພື່ອໃຫ້ຫ້ອງການສືບຕໍ່ຮຽກເກັບເງິນຄ່າລ້ຽງດູເດັກນ້ອຍຂອງທ່ານແທນທ່ານ.
  - ບໍ່ວ່າທ່ານຈະໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍດ້ວຍວິທີໃດກໍ່ຕາມ, ຂໍໃຫ້ທ່ານຈົດບັນທຶກຂໍ້ມູນຈໍານວນເງິນແລະວັນທີທີ່ທ່ານໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍ. ທ່ານຈໍາເປັນຕ້ອງນໍາໃຊ້ຂໍ້ມູນນີ້ເພື່ອລາຍງານກ່ຽວກັບຄ່າລ້ຽງດູເດັກນ້ອຍທີ່ທ່ານໄດ້ຮັບໃຫ້ທາງຄາວຕີ້ຊາບຖ້າກົດລະບຽບກ່ຽວກັບການລາຍງານລາຍໄດ້ສໍາລັບກໍລະນີຂອງທ່ານກໍານົດໃຫ້ທ່ານຕ້ອງເຮັດ;
- ຖ້າທ່ານບໍ່ມີກໍລະນີຂໍຄວາມຄວາມຊ່ວຍເຫຼືອຄ່າລ້ຽງດູເດັກນ້ອຍທີ່ເປີດຢູ່ກັບທາງ LCSA, ທ່ານຈະຕ້ອງສະໝັກຂໍເອົາການບໍລິການຄ່າລ້ຽງດູເດັກນ້ອຍກັບ LCSA ເພື່ອການກໍານົດຄວາມເປັນພໍ່ຂອງລູກຂອງທ່ານຖ້າຈໍາເປັນ, ແລະໃຫ້ມີການຮຽກເກັບເງິນຄ່າລ້ຽງດູເດັກນ້ອຍແທນແລະນໍາສົ່ງໃຫ້ທ່ານ. ທາງຄາວຕີ້ສາມາດຊ່ວຍທ່ານດໍາເນີນການເລື່ອງນີ້ໄດ້;
- ເງິນຄ່າລ້ຽງດູເດັກນ້ອຍທີ່ທາງ LCSA ຮຽກເກັບແລະນໍາສົ່ງໃຫ້ທ່ານຈະບໍ່ແມ່ນການຈ່າຍເງິນຊ່ວຍເຫຼືອຄືນໃຫ້ກັບຄອບຄົວຂອງທ່ານອີກຕໍ່ໄປ ດັ່ງນັ້ນໃນການນັບຈໍານວນເດືອນ ໒໐ ເດືອນໃນໂຄງການຊ່ວຍເຫຼືອ CalWORKs ສໍາລັບຜູ້ໃຫຍ່ ໂມງຈະບໍ່ "ຢຸດເດີນ" ອີກຕໍ່ໄປ ເວລາຈະຖືກນັບໄປເລື້ອຍໆ;
- ຖ້າທ່ານໄດ້ຮັບລາຍໄດ້ຈາກຄ່າລ້ຽງດູເດັກນ້ອຍສໍາລັບລູກຄົນດຽວຫຼືຫຼາຍຄົນຂອງທ່ານຈາກໂຄງການ CalWORKs, ພວກເຮົາບໍ່ນັບຈໍານວນທໍາອິດ ໑໐໐ ໂດລາໃນແຕ່ລະເດືອນຖ້າທ່ານມີເດັກນ້ອຍໜຶ່ງຄົນທີ່ເປັນບຸກຄົນມີສິດໄດ້ຮັບຄວາມຊ່ວຍເຫຼືອ (AU) ຫຼື ໘໐໐ ໂດລາໃນແຕ່ລະເດືອນຖ້າທ່ານມີເດັກນ້ອຍຫຼາຍກວ່າໜຶ່ງຄົນທີ່ເປັນ AU. ສ່ວນທີ່ເຫຼືອອາດຈະຖືກນັບເປັນລາຍໄດ້ເພື່ອປັບຫຼຸດເງິນຊ່ວຍເຫຼືອລ້າ CalWORKs ຂອງທ່ານ;
- ຖ້າທ່ານຍັງໄດ້ຮັບ CalFresh ອີກເຊັ່ນກັນ, ເງິນລາຍໄດ້ຄ່າລ້ຽງດູເດັກນ້ອຍທີ່ທ່ານໄດ້ຮັບອາດຈະຖືກນໍາໃຊ້ເພື່ອຄິດໄລ່ຈໍານວນເງິນຊ່ວຍເຫຼືອ CalFresh ຂອງທ່ານ.

**ກະລຸນາໂທຫາຄາວຕີ້ທັນທີຖ້າທ່ານມີຄໍາຖາມໃດໜຶ່ງ.**